ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ສະຫະກອນອອມຊັບພະນັກງານ ທຫລ ເລກທີ: 03 /ສອສພ.ທຫລ
ນະຄອນຫຼວງວຽງຈັນ, ວັນທີ: 01 MAR 2019

ສຳນັກງານ ຄຄຊ
ເລກທີ 0219
ວັນທີ 05 MAR 2019
ໂທລະສັບ 021 217770

# ແຈ້ງການ

**ເຖິງ :** ບັນດາກົມ - ທຽບເທົ່າ ແລະ ສາຂາ ທະນາຄານແຫ່ງ ສປປ ລາວ.
**ເລື່ອງ :** ການເຂົ້າເປັນສະມາຊິກໃໝ່ ຫຼື ການປ່ຽນແປງຈຳນວນເງິນປະກອບຮຸ້ນ, ອັດຕາດອກເບ້ຍ, ການກູ້ຢືມ ແລະ ການຖອນຮຸ້ນ ຂອງສະຫະກອນອອມຊັບ ພະນັກງານ ທຫລ.

- ອີງຕາມຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳວຽກງານສະຫະກອນອອມຊັບ ພະນັກງານ ທຫລ ສະບັບເລກທີ 901/ທຫລ, ລົງວັນທີ 03 ພະຈິກ 2015;
- ອີງຕາມບົດບັນທຶກກອງປະຊຸມ ຂອງຄະນະຮັບຜິດຊອບສະຫະກອນອອມຊັບພະນັກງານ ທຫລ ສະບັບ ເລກທີ 01/ສອສພ.ທຫລ, ລົງວັນທີ 08 ກຸມພາ 2019.

ເພື່ອເປັນການຊ່ວຍເຫຼືອສະມາຊິກສະຫະກອນອອມຊັບ ໃນການຖອນຮຸ້ນກູ້ ແລະ ກູ້ຢືມເງິນມີຄວາມສະດວກ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດ. ສະນັ້ນ, ຄະນະຮັບຜິດຊອບສະຫະກອນອອມຊັບພະນັກງານ ທຫລ ຈຶ່ງຂໍຖືເປັນກຽດແຈ້ງມາຍັງສະມາຊິກສະຫະກອນ ທຫລ ຊາບໃຫ້ທົ່ວເຖິງກັນ ດັ່ງນີ້:

1. **ການເຂົ້າເປັນສະມາຊິກໃໝ່ ຫຼື ການປ່ຽນແປງຈຳນວນເງິນປະກອບຮຸ້ນ:** ສະມາຊິກຜູ້ທີ່ມີຄວາມຕ້ອງການເຂົ້າເປັນສະມາຊິກໃໝ່ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນບົດແນະນຳການຄຸ້ມຄອງສະຫະກອນອອມຊັບຂອງທະນາຄານແຫ່ງ ສປປ ລາວ. ສຳລັບສະມາຊິກເກົ່າ ຜູ້ທີ່ມີຄວາມຕ້ອງການປັບປຸງ (ປັບເພີ່ມ ຫຼື ປັບຫຼຸດ) ມູນຄ່າຮຸ້ນຂອງຕົນທີ່ໄດ້ປະກອບໃນແຕ່ລະເດືອນ ກໍ່ສາມາດປັບປຸງໄດ້.

ລາຍລະອຽດ ກະລຸນາປະກອບຂໍ້ມູນເຂົ້າໃນແບບຟອມ (ທີ່ໄດ້ຄັດຕິດມາພ້ອມນີ້) ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ແລ້ວນຳສົ່ງມາຍັງຄະນະຮັບຜິດຊອບສະຫະກອນອອມຊັບພະນັກງານ ທຫລ (ທ່ານ ນ. ສີສົມພອນ ດວງມາລາ, ກົມບໍລິການທະນາຄານ). ກຳນົດສົ່ງ ບໍ່ໃຫ້ກາຍວັນທີ **15 ມີນາ 2019**, ຖ້າກາຍກຳນົດເວລາດັ່ງກ່າວຖືວ່າສະຫຼະສິດ.

2. **ອັດຕາດອກເບ້ຍເງິນກູ້ຢືມ:** ປັບຫຼຸດອັດຕາດອກເບ້ຍເງິນກູ້ຢືມ ໄລຍະ 1 ປີລົງມາ ຈາກເດີມ 5% ຕໍ່ປີ ມາເປັນ 4% ຕໍ່ປີ ແລະ ໄລຍະເວລາ 1 ປີຂຶ້ນໄປ ຈາກເດີມ 8% ຕໍ່ປີ ມາເປັນ 7% ຕໍ່ປີ. ສຳລັບເງິນກູ້ຢືມຂອງສະມາຊິກທີ່ມີຍອດເຫຼືອແມ່ນຈະຄິດໄລ່ດອກເບ້ຍ ຕາມອັດຕາດອກເບ້ຍທີ່ປັບປຸງໃໝ່ນີ້, ເຊິ່ງຈະເລີ່ມຈັດຕັ້ງປະຕິບັດໃນເດືອນມີນາ 2019 ເປັນຕົ້ນໄປ.

3. **ການສະເໜີຂໍກູ້ຢືມເງິນຂອງສະມາຊິກ:** ແມ່ນຈັດຕັ້ງປະຕິບັດເປັນເອກະພາບກັນ ຕາມແບບຟອມທີ່ໄດ້ຄັດຕິດມາພ້ອມນີ້.

4. **ການຊຳລະເງິນກູ້ບ້ວງເກົ່າ ແລ້ວສະເໜີຢືມບ້ວງໃໝ່:** ສະມາຊິກຜູ້ທີ່ມີຈຸດປະສົງຊຳລະເງິນກູ້ບ້ວງເກົ່າແລ້ວສະເໜີກູ້ຢືມບ້ວງໃໝ່ ຕ້ອງຊຳລະເງິນກູ້ທີ່ໄດ້ກູ້ຢືມແລ້ວໄດ້ 50% ຂອງຈຳນວນເງິນທີ່ໄດ້ກູ້ຢືມ ຈຶ່ງສາມາດຊຳລະເງິນກູ້ທີ່ຍັງເຫຼືອທັງໝົດ ແລ້ວສະເໜີກູ້ຢືມບ້ວງໃໝ່ໄດ້, ເຊິ່ງຄະນະຮັບຜິດຊອບສະຫະກອນຈະພິຈາລະນາຢ່າງໜ້ອຍ 15 ວັນ

ພາຍຫຼັງຊໍາລະບ້ວງເກົ່າແລ້ວ. ສໍາລັບສະມາຊິກຜູ້ທີ່ມີຈຸດປະສົງຊໍາລະເງິນກູ້ບ້ວງເກົ່າ (ໂດຍບໍ່ມີຈຸດປະສົງກູ້ຢືມບ້ວງໃໝ່) ແມ່ນສາມາດຊໍາລະເງິນກູ້ທັງໝົດຂອງຕົນເອງໄດ້ທັນທີ ໂດຍບໍ່ຈໍາເປັນຕ້ອງຊໍາລະຕາມສັນຍາຮອດ 50%.

5. **ການສະເໜີຖອນຮຸ້ນຂອງສະມາຊິກ:** ສະມາຊິກຜູ້ທີ່ມີຈຸດປະສົງສະເໜີຖອນຮຸ້ນ ຕ້ອງແມ່ນຜູ້ທີ່ບໍ່ມີໜີ້ເງິນກູ້, ເຊິ່ງຄະນະຮັບຜິດຊອບສະຫະກອນພິຈາລະນາຢ່າງໜ້ອຍ 5 ວັນລັດຖະການ ທັງນີ້ກໍ່ເພື່ອບໍ່ໃຫ້ກະທົບຕໍ່ແຫຼ່ງທຶນຂອງສະຫະກອນທີ່ໄດ້ໃຫ້ສະມາຊິກກູ້ຢືມແຕ່ລະໄລຍະ.

6. ຜູ້ຮັບຜິດຊອບວຽກງານບັນຊີແລະການເງິນ ສະຫະກອນອອມຊັບພະນັກງານ ທຫລ ແມ່ນ ທ່ານ ນ. ຄໍາເຜີຍ ວໍລະເດດ ແລະ ຜູ້ຊ່ວຍວຽກ ທີ່ກົມບໍລິການທະນາຄານ (ປ່ຽນແທນ ທ່ານ ນ. ສອນນາລີ ພົມມາໄຊ ແລະ ຜູ້ຊ່ວຍວຽກຢູ່ກົມບັນຊີແລະການເງິນ), ເລີ່ມປະຕິບັດແຕ່ເດືອນ ມີນາ 2019 ເປັນຕົ້ນໄປ.

7. ກອງເລຂາຊ່ວຍວຽກຄະນະຮັບຜິດຊອບສະຫະກອນອອມຊັບ ທຫລ:

   1) ທ່ານ ນ. ສີສົມພອນ ດວງມາລາ ຜູ້ຊ່ວຍວຽກ (ວຽກງານບັນຊີ ແລະ ເອກະສານລາຍງານການເງິນ), ໝາຍເລກໂທລະສັບ: 020 5564 1277 ທີ່ກົມບໍລິການທະນາຄານ;

   2) ທ່ານ ນ. ປານີພອນ ບຸນສະຫວັດ ຜູ້ຊ່ວຍວຽກ ການຮັບ ແລະ ກວດກາເອກະສານການຂໍກູ້ຢືມເງິນ ຫຼື ຖອນຮຸ້ນ, ໝາຍເລກໂທລະສັບ: 020 2824 6511 ທີ່ກົມກວດກາພາຍໃນ.

8. ແຈ້ງການສະບັບນີ້ມີຜົນສັກສິດນັບ ແຕ່ ເດືອນ **ມີນາ 2019** ເປັນຕົ້ນໄປ ແລະ ນໍາໃຊ້ປ່ຽນແທນແຈ້ງການສະບັບເລກທີ 11/ສອສພ, ລົງວັນທີ 07 ສິງຫາ 2017.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຈິດໃຈດັ່ງກ່າວດ້ວຍ.

ຫົວໜ້າຫ້ອງການ,

ຫົວໜ້າຄະນະຮັບຜິດຊອບສະຫະກອນ ທຫລ

ເພັດສະຖາພອນ ແກ້ວວົງວິຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ກົມ..............................

ເລກທີ: .........../........

ທີ່.............................., ວັນທີ: .......................

# ໜັງສືສະເໜີ

**ຮຽນ :** ຄະນະບໍລິຫານງານສະຫະກອນອອມຊັບພະນັກງານ ທະນາຄານແຫ່ງ ສປປ ລາວ.

**ເລື່ອງ :** ສະໝັກເຂົ້າເປັນສະມາຊິກ ຫຼື ປັບປຸງມູນຄ່າຮຸ້ນສະຫະກອນອອມຊັບພະນັກງານ ທຫລ.

- ອີງຕາມບົດແນະນຳການຄຸ້ມຄອງສະຫະກອນອອມຊັບຂອງ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 01/ສອສພ.ທຫລ, ລົງວັນທີ 21 ທັນວາ 2016;
- ອີງຕາມຄວາມຕື່ນຕົວສະໝັກໃຈ ແລະ ເຫັນດີເປັນເອກະພາບໃນການຈັດຕັ້ງປະຕິບັດລະບຽບຫຼັກການ ກໍ່ຄືຈຸດປະສົງເປົ້າໝາຍສະຫະກອນອອມຊັບພະນັກງານ ທຫລ ວາງອອກໃນແຕ່ລະໄລຍະ.

ຂ້າພະເຈົ້າຊື່ ແລະ ນາມສະກຸນ ທ່ານ............................................... ປັດຈຸບັນເປັນພະນັກງານລົມບູນ / ພະນັກງານຝຶກງານ 95%, ສັງກັດຢູ່ກົມ.......................................... ທະນາຄານແຫ່ງ ສປປ ລາວ, ມີຈຸດປະສົງຮຽນສະເໜີມາຍັງຄະນະຮັບຜິດຊອບສະຫະກອນອອມຊັບພະນັກງານ ທຫລ ດັ່ງນີ້:

- **ຂໍສະໝັກເຂົ້າເປັນສະມາຊິກໃໝ່** ຂອງສະຫະກອນອອມຊັບພະນັກງານ ທຫລ ໂດຍການປະກອບຮຸ້ນ ຈຳນວນ…...................... ກີບຕໍ່ເດືອນ (ຕໍ່າສຸດ 50.000 ກີບຕໍ່ເດືອນ ແລະ ສູງສຸດບໍ່ເກີນ 1.000.000 ກີບຕໍ່ເດືອນ) ໃນຮູບແບບການຫັກເງິນເດືອນຂອງຂ້າພະເຈົ້າໃນແຕ່ລະເດືອນ ນັບແຕ່ເດືອນ…................... ເປັນຕົ້ນໄປ.

- **ຂ້າພະເຈົ້າເປັນສະມາຊິກເກົ່າທີ່ຕ້ອງການເພີ່ມຮຸ້ນ:** ມູນຄ່າຮຸ້ນເດີມທີ່ປະກອບ ຈຳນວນ.................... ກີບຕໍ່ເດືອນ ແລະ ຂໍປັບເພີ່ມມາເປັນ ຈຳນວນ…...................... ກີບຕໍ່ເດືອນ (ສູງສຸດບໍ່ເກີນ 1.000.000 ກີບຕໍ່ເດືອນ).

- **ຂ້າພະເຈົ້າເປັນສະມາຊິກເກົ່າທີ່ຕ້ອງການຫຼຸດຮຸ້ນ:** ມູນຄ່າຮຸ້ນເດີມທີ່ປະກອບ ຈຳນວນ.................. ກີບຕໍ່ເດືອນ ແລະ ຂໍປັບຫຼຸດລົງມາເປັນ ຈຳນວນ…................... ກີບຕໍ່ເດືອນ (ຕໍ່າສຸດບໍ່ຫຼຸດ 50.000 ກີບຕໍ່ເດືອນ).

**ຄຳປະຕິຍານ:**

1. ຂ້າພະເຈົ້າໄດ້ສະໝັກໃຈເຂົ້າເປັນ ສະມາຊິກ / ປັບປຸງມູນຄ່າຮຸ້ນ ສະຫະກອນດ້ວຍຄວາມເຫັນດີເປັນເອກະພາບກັບລະບຽບຫຼັກການ ແລະ ຍິນດີປະຕິບັດລະບຽບການ ແລະ ກິດຈະກຳຕ່າງໆຂອງສະຫະກອນຢ່າງເຂັ້ມງວດ.
2. ຖ້າຫາກມີເຈດຕະນາ ຫຼື ຝ່າຝືນລະບຽບຫຼັກການບໍ່ວ່າກໍລະນີໃດໆທີ່ສົ່ງຜົນກະທົບ, ສ້າງຄວາມເສຍຫາຍຕໍ່ຊື່ສຽງ, ຊັບສິນ ຫຼື ຜົນປະໂຫຍດສ່ວນລວມຂອງສະຫະກອນ ແລະ ຂອງສະມາຊິກ, ຂ້າພະເຈົ້າຍິນຍອມພ້ອມທີ່ຈະຮັບຜິດຊອບຕໍ່ກໍລະນີດັ່ງກ່າວຕໍ່ໜ້າການຈັດຕັ້ງທຸກຂັ້ນ.
3. ຂ້າພະເຈົ້າຈະເປັນເຈົ້າການປົກປ້ອງຜົນປະໂຫຍດສ່ວນລວມຂອງສະຫະກອນ ແລະ ຂອງສະມານຊິກທຸກຢ່າງດ້ວຍການຖອກເງິນຄ່າຮຸ້ນ, ຊໍາລະເງິນກູ້ ແລະ ພັນທະອື່ນໆໃຫ້ຖືກຕ້ອງສອດຄ່ອງກັບສັນຍາ ແລະ ລະບຽບການດ້ວຍຄວາມບໍລິສຸດສັດຊື່, ກໍລະນີທີ່ມີບັນຫາໃດໆທີ່ເກີດຂຶ້ນຈາກຕົວເອງທີ່ໄດ້ກ່າວມາຂ້າງເທິງນີ້ ຂ້າພະເຈົ້າຂໍຮັບຜິດຊອບຕໍ່ການຈັດຕັ້ງ, ລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ.

ດັ່ງນັ້ນ, ຫວັງວ່າຈະໄດ້ຮັບການພິຈາລະນາຈາກຄະນະຮັບຜິດຊອບຕາມທາງຄວນດ້ວຍ.

**ຫົວໜ້າກົມ** | **ຜູ້ສະເໜີ**

- ໝາຍເຫດ:
- ພະນັກງານ 95% ແລະ ພະນັກງານຕາມສັນຍາ (ອະນາໄມ ແລະ ຂັບລົດ) ສາມາດສະໝັກເຂົ້າຮ່ວມເປັນສະມາຊິກໃໝ່ ເພື່ອຝາກສະສົມຮຸ້ນຂອງຕົນ ແລະ ສາມາດຮັບຜົນປະໂຫຍດຕ່າງໆຕາມປົກກະຕິ, ໃນນັ້ນ:
  - ພະນັກງານ 95% ຈະສາມາດກູ້ຢືມໄດ້ຈົນກວ່າຈະໄດ້ຮັບການຕົກລົງຮັບເຂົ້າເປັນພະນັກງານລັດຖະກອນ ຄົບ 01 ປີ.
  - ພະນັກງານລົມບຸນ ແລະ ພະນັກງານຕາມສັນຍາ ຈະສາມາດກູ້ຢືມໄດ້ຈົນກວ່າຈະໄດ້ຮັບການເຂົ້າເປັນສະມາຊິກສະຫະກອນ ຄົບ 01 ປີ.
- ເງື່ອນໄຂໃນການກູ້ຢືມຂອງ ພະນັກງານຕາມສັນຍາ ແມ່ນກູ້ຢືມໄດ້ ສູງສຸດ 12.000.000 ກີບຕໍ່ຄັ້ງ, ໄລຍະເວລາການຊໍາລະ ພາຍໃນ 12 ເດືອນ.
- ພະນັກງານທົດລອງງານ ແມ່ນບໍ່ມີເງື່ອນໄຂສະໝັກເຂົ້າເປັນສະມາຊິກ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມ..............................

ເລກທີ: .........../........

ທີ່..............................., ວັນທີ: .......................

**ໜັງສືສະເໜີ**

**ຮຽນ :** ຄະນະຮັບຜິດຊອບສະຫະກອນອອມຊັບພະນັກງານ ທຫລ.

**ເລື່ອງ :** ສະເໜີຂໍຖອນຮຸ້ນຈາກສະຫະກອນອອມຊັບພະນັກງານ ທຫລ.

- ອີງຕາມ..................................................................................................................
...................................................................................................................................

ຂ້າພະເຈົ້າ...................................... ຕໍາແໜ່ງ............................ ສັງກັດກົມ.................................. ໝາຍເລກໂທລະສັບ.................................... ຂໍຖືເປັນກຽດຮຽນສະເໜີມາຍັງທ່ານ ເພື່ອຂໍຖອນຮຸ້ນຈາກບັນຊີສະຫະກອນອອມຊັບພະນັກງານ ທຫລ ຈໍານວນ............................ກີບ, ເຊິ່ງປັດຈຸບັນຂ້າພະເຈົ້າມີຮຸ້ນ ຈໍານວນ............................ ກີບ (ຍອດທ້າຍເດືອນ.................) ແລະ ຂ້າພະເຈົ້າບໍ່ໄດ້ມີໜີ້ນໍາສະຫະກອນອອມຊັບພະນັກງານ ທຫລ / ໄດ້ຊໍາລະໜີ້ໝົດແລ້ວ ຕາມເອກະສານຄັດຕິດ.

ເຫດຜົນໃນການຂໍຖອນຮຸ້ນ .................................................................................................
...................................................................................................................................

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ.

**ຫົວໜ້າກົມ** **ຜູ້ສະເໜີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມ.............................

ເລກທີ: ........../.......

ທີ່............................., ວັນທີ: ......................

## ໜັງສືສະເໜີຂໍກູ້ຢືມເງິນ

ນຳສະຫະກອນອອມຊັບພະນັກງານ ທຫລ

1. ຂ້າພະເຈົ້າ..................................................., ອາຍຸ............ປີ, ໝາຍເລກໂທລະສັບ..............................
   ມີຈຸດປະສົງຂໍກູ້ຢືມເງິນ ຈຳນວນ.................................. ກີບ (...................................................... ກີບ)
   ເປົ້າໝາຍນຳໃຊ້ເງິນກູ້ຢືມນີ້ເພື່ອ..........................................................................................................
   ..........................................................................................................................................
2. ປັດຈຸບັນຂ້າພະເຈົ້າມີເງິນເດືອນປະຈຳ ເດືອນລະ ..........................................ກີບ.
   - ລາຍໄດ້ອື່ນໆທີ່ໄດ້ຮັບ ປະມານ ............................................ ກີບ ຕໍ່ວັນ / ຕໍ່ເດືອນ / ຕໍ່ປີ.
3. ຂ້າພະເຈົ້າມີເງິນຮຸ້ນຢູ່ສະຫະກອນອອມຊັບພະນັກງານ ທຫລ ຈຳນວນ ..............................................ກີບ.
4. ຂ້າພະເຈົ້າມີໜີ້ສິນ ນຳບຸກຄົນ / ພາກສ່ວນອື່ນ ລວມເປັນເງິນ ...............................................ກີບ, ໃນນັ້ນ:
   - ຊື່ບຸກຄົນ / ພາກສ່ວນ ........................................... ຈຳນວນເງິນ ..........................................ກີບ;
   - ຊື່ບຸກຄົນ / ພາກສ່ວນ ........................................... ຈຳນວນເງິນ ..........................................ກີບ;
   - ຊື່ບຸກຄົນ / ພາກສ່ວນ ........................................... ຈຳນວນເງິນ ..........................................ກີບ.
5. ຂ້າພະເຈົ້າຕ້ອງໃຊ້ຈ່າຍພາຍໃນຄອບຄົວ ເດືອນລະ ...................................................................ກີບ.
6. ຂ້າພະເຈົ້າຂໍຮັບຮອງວ່າຈະໃຊ້ໜີ້ຄືນພ້ອມດອກເບ້ຍ ພາຍໃນ .............................................ເດືອນ / ປີ.
   ໂດຍການຈ່າຍເປັນເດືອນ ເດືອນລະ ..................................ກີບ, ອັດຕາດອກເບ້ຍ ............% / ຕໍ່ເດືອນ / ຕໍ່ປີ.
7. ການຊຳລະແມ່ນໂດຍຕັດຈາກບັນຊີເງິນເດືອນ ເລກໝາຍບັນຊີເງິນຝາກ...............................................
   ອອກຊື່.......................................................... ທະນາຄານ..................................................................

ຂ້າພະເຈົ້າຂໍຮັບຮອງວ່າ ເນື້ອໃນທີ່ກ່າວມາຂ້າງເທິງນີ້ແມ່ນຄວາມຈິງທຸກປະການ, ຫາກມີສິ່ງໃດທີ່ເຮັດໃຫ້ສະຫະກອນ ເກີດຄວາມເສຍຫາຍຈະຂໍຮັບຜິດຊອບຕໍ່ການຈັດຕັ້ງ ແລະ ສະຫະກອນທຸກຢ່າງ.

8. ເຊັນຮັບຮູ້ຈາກການຈັດຕັ້ງທີ່ຕົນສັງກັດ
   - ຂັ້ນພະແນກ (ລົງລາຍເຊັນ ແລະ ຊື່ແຈ້ງ)

     ........................................................

   - ຫົວໜ້າກົມ (ລົງລາຍເຊັນ, ຊື່ແຈ້ງ ແລະ ປະທັບກາ)

     ..................................

ຄໍ້າປະກັນໂດຍຄອບຄົວ ( ສາມີ / ພັນລະຍາ / ອື່ນໆ )

ຊື່ ແລະ ນາມສະກຸນ.......................................

ສາຍພົວພັນ....................................................

ໝາຍເລກໂທລະສັບ.........................................

ລາຍຮັບ.......................................... ກີບ/ເດືອນ

ເຊັນຢັ້ງຢືນ....................................................

ຜູ້ສະເໜີ

ໝາຍເຫດ: - ຄ່າທຳນຽມໃນເວລາຖອນເງິນກູ້ 0,05% ຂອງວົງເງິນທີ່ກູ້ຢືມ.
- ເອກະສານຄັດຕິດຂອງຜູ້ສະເໜີ:
ສຳເນົາ ປຶ້ມບັນຊີເງິນຝາກຂອງທະນາຄານ ຕາມເລກໝາຍບັນຊີທີ່ໄດ້ລະບຸໄວ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ສະຫະກອນອອມຊັບພະນັກງານ ທຫລ

ເລກທີ:........../ສອສພ.ທຫລ
ທີ່..........................., ວັນທີ:.............................

# ໜັງສືສັນຍາຂໍກູ້ຢືມເງິນ

ຮຽນ: ຄະນະກໍາມະການ ສະຫະກອນອອມຊັບພະນັກງານ ທຫລ.

ຂ້າພະເຈົ້າ................................................., ອາຍຸ............ປີ, ສັງກັດກົມ.............................................
ໄດ້ກູ້ຢືມເງິນຈາກສະຫະກອນອອມຊັບພະນັກງານ ທຫລ
ຈໍານວນ .......................................ກີບ (...........................................................................ກີບ) ແລະ
ໄດ້ຮັບເງິນຈໍານວນນີ້ຄົບຖ້ວນຖືກຕ້ອງໃນມື້ທີ່ເຮັດສັນຍານີ້ແລ້ວ, ຂ້າພະເຈົ້າຂໍໃຫ້ສັນຍາຕໍ່ສະຫະກອນອອມຊັບນີ້ວ່າ:

1. ຂ້າພະເຈົ້າຕົກລົງຈ່າຍຄ່າດອກເບ້ຍ ໃນອັດຕາ................% ຕໍ່ປີ ຕາມຈໍານວນຕົ້ນທຶນທີ່ຕິດໜີ້, ຖ້າຫາກວ່າ ໃນຕໍ່ໜ້າ ສະຫະກອນອອມຊັບພະນັກງານ ທຫລ ມີຈຸດປະສົງປັບປຸງອັດຕາດອກເບ້ຍເງິນກູ້ຢືມນີ້ໃນອັດຕາທີ່ບໍ່ເກີນລະບຽບ ແລະ ກົດໝາຍກໍານົດ ແລະ ໄດ້ມີການຕົກລົງຈາກຄະນະກໍາມະການ ກໍ່ຄືຄວາມເຫັນດີເຫັນພ້ອມຈາກສະມາຊິກ ຂ້າພະເຈົ້າ ຍິນດີປະຕິບັດ.
2. ຂ້າພະເຈົ້າສັນຍາວ່າຈະຊໍາລະເງິນກູ້ຄືນໃຫ້ແກ່ສະຫະກອນ ຈໍານວນ.................................................ກີບ ພ້ອມດ້ວຍດອກເບ້ຍ ພາຍໃນໄລຍະເວລາ..............ເດືອນ / ປີ ໂດຍກໍານົດເວລາການຈ່າຍ ດັ່ງນີ້:
   - ຊໍາລະເປັນແຕ່ລະເດືອນ ເດືອນລະ............................ກີບຕໍ່ເດືອນ ພາຍໃນກໍານົດ............ເດືອນ.
   - ຊໍາລະໝົດເທື່ອດຽວພາຍໃນກໍານົດ...............ເດືອນ.
3. ຫາກຂ້າພະເຈົ້າບໍ່ຊໍາລະເງິນກູ້ພ້ອມດອກເບ້ຍຕາມທີ່ໄດ້ລະບຸໄວ້ໃນຂໍ້ 2 ຫຼື ກໍລະນີໃດໆດັ່ງກ່າວໃນກົດລະບຽບຂອງ ສະຫະກອນ ຂ້າພະເຈົ້າຍິນດີໃຫ້ສະຫະກອນດໍາເນີນການທວງໜີ້ໂດຍບໍ່ມີຂໍ້ອ້າງໃດໆ.
4. ຂ້າພະເຈົ້າຍິນດີເອົາເງິນເດືອນ, ບັນດາຊັບສິນ, ສິດ ແລະ ຜົນປະໂຫຍດຂອງຂ້າພະເຈົ້າຄໍ້າປະກັນໃນການກູ້ຢືມເງິນໃນຄັ້ງນີ້ ເພື່ອໃຊ້ໜີ້ຄືນຈົນກວ່າຈະຄົບຕາມຈໍານວນ.

ດັ່ງນັ້ນ, ຂ້າພະເຈົ້າຈຶ່ງເຮັດສັນຍາສະບັບນີ້ໄວ້ເພື່ອເປັນຫຼັກຖານ.

| ຜູ້ຄໍ້າປະກັນ | ຜູ້ສັນຍາ |
|---|---|
| (ລົງລາຍເຊັນ ແລະ ຊື່ແຈ້ງ) | (ລົງລາຍເຊັນ ແລະ ຊື່ແຈ້ງ) |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ສະຫະກອນອອມຊັບພະນັກງານ ທຫລ

ເລກທີ:.........../ສອສພ.ທຫລ
ທີ່..........................., ວັນທີ:.............................

## ບົດບັນທຶກ ການອະນຸມັດເງິນກູ້ຂອງຄະນະກຳມະການສະຫະກອນອອມຊັບພະນັກງານ ທຫລ

- ອີງຕາມໃບສະເໜີຂໍກູ້ຂອງສະມາຊິກ ເລກທີ............/ສອສພ.ທຫລ, ລົງວັນທີ............................

1. ຈຸດປະສົງຂອງການກູ້ຢືມ:
- ມີຄວາມຈຳເປັນແທ້ ☐, ໜ້າສະໜັບສະໜູນ ☐, ມີຄວາມສ່ຽງ ☐, ບໍ່ສົມຄວນອະນຸມັດ ☐, ແລະ ເຫດຜົນອື່ນໆ.........
2. ຄຸນສົມບັດ / ປະຫວັດຂອງຜູ້ກູ້ຢືມ:
- ຄຸນສົມບັດດີ ☐, ຄຸນສົມບັດປານກາງ ☐, ຄຸນສົມບັດດີຫຼາຍ ☐, ມີຄວາມຮັບຜິດຊອບສູງ ☐
3. ຄວາມສາມາດໃນການໃຊ້ແທນຄືນ:
- ມີບັນຫາ ☐, ປົກກະຕິ ☐, ດີ ☐, ດີຫຼາຍ ☐, ບໍ່ເຄີຍມີບັນຫາໃນການຊຳລະຄືນ ☐, ອື່ນໆ........................
4. ການຄ້ຳປະກັນເງິນກູ້:
   4.1 <u>ດ້ວຍຊັບສິນມີຄ່າ:</u>
   - ຍັງບໍ່ທັນພຽງພໍ ☐, ໄດ້ສ່ວນໃດສ່ວນໜຶ່ງ ☐, ຮັບປະກັນ ☐, ພຽງພໍ ☐, ຄຸ້ມໄດ້ທັງໝົດ ☐

   4.2 <u>ດ້ວຍບຸກຄົນສະມາຊິກຄ້ຳປະກັນ:</u>
   - ບໍ່ໜ້າເຊື່ອຖື ☐, ເປັນທີ່ໜ້າເຊື່ອຖື ☐, ເປັນຄະນະ ເປັນການນຳ ໃນອົງການຈັດຕັ້ງ ☐

   4.3 <u>ດ້ວຍກຸ່ມສະມາຊິກແຕ່ 2 ຄົນຂຶ້ນໄປຄ້ຳປະກັນ:</u>
   - ບໍ່ເປັນທີ່ໜ້າເຊື່ອຖື ☐, ບໍ່ພຽງພໍ ☐, ພຽງພໍ ☐, ຮັບປະກັນ ☐, ແລະ ອື່ນໆ............................
5. ເຫດຜົນ ແລະ ຂໍ້ຄິດເຫັນອື່ນໆ.........................................................................................................

.................................................................................................................................................

ດັ່ງນັ້ນ, ຄະນະກຳມະການເງິນກູ້ຈຶ່ງລົງມະຕິວ່າ: ອະນຸມັດ ☐, ບໍ່ອະນຸມັດ ☐ ໃຫ້ຜູ້ກ່ຽວຢືມ:
ຈຳນວນຕົວເລກ.......................................................ກີບ ແລະ (ຂຽນເປັນຕົວໜັງສື)
(.................................................................................................ກີບ)

ລາຍເຊັນ ຫົວໜ້າຄະນະກຳມະການສະຫະກອນ...........................................................................,

ຮອງຫົວໜ້າຄະນະກຳມະການ (ຮັບຜິດຊອບເງິນກູ້)...........................................................,

ຄະນະກຳມະການກວດກາ.........................................................................................,

ຄະນະກຳມະການບັນຊີ.............................................................................................

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ສະຫະກອນອອມຊັບພະນັກງານ ທຫລ

# ໜັງສືຍິນຍອມຄໍ້າປະກັນ

ຂ້າພະເຈົ້າຊື່:..............................................., ອາຍຸ........... ປີ, ບ້ານຢູ່ປັດຈຸບັນ......................................, ເມືອງ................................, ແຂວງ....................................., ໝາຍເລກໂທລະສັບ. .............................................. ສາຍພົວພັນ...................... ຂອງທ່ານ............................................................ ທີ່ໄດ້ກູ້ຢືມເງິນນຳສະຫະກອນອອມຊັບພະນັກງານ ທຫລ ຈຳນວນ ............................................. ກີບ. ຂ້າພະເຈົ້າໄດ້ຍິນຍອມຄໍ້າປະກັນການກູ້ຢືມເງິນດັ່ງກ່າວດັ່ງນີ້:

- **ກໍລະນີຜູ້ຄໍ້າປະກັນແມ່ນພະນັກງານຂອງ ທຫລ:** ຂ້າພະເຈົ້າ ສັງກັດຢູ່ກົມ ............................................ ທະນາຄານແຫ່ງ ສປປ ລາວ ຍິນຍອມໃຫ້ສະຫະກອນອອມຊັບພະນັກງານ ທຫລ ຕັດເງິນເດືອນຂອງຂ້າພະເຈົ້າຕາມມູນຄ່າສັນຍາກູ້ຢືມເງິນໃນກໍລະນີ ທ່ານ............................................................ ມີບັນຫາຄ້າງຊຳລະເງິນກູ້ຢືມນຳສະຫະກອນອອມຊັບພະນັກງານ ທຫລ ພາຍໃນ 02 - 03 ເດືອນ ຕິດຕໍ່ກັນ.
- **ກໍລະນີຜູ້ຄໍ້າປະກັນບໍ່ແມ່ນພະນັກງານຂອງ ທຫລ:** ຂ້າພະເຈົ້າ ອາຊີບ.................................................................. ສະຖານທີ່ເຮັດວຽກ................................................., ບ້ານ..............................., ເມືອງ............................., ແຂວງ.................................. ຂ້າພະເຈົ້າຍິນຍອມຈະນຳໃຊ້ແຫຼ່ງລາຍຮັບຂອງຕົນຈາກ............................................ ຈຳນວນເງິນ..............................ກີບຕໍ່ເດືອນ ແລະ ຊັບສິນຄໍ້າປະກັນປະເພດ............................................ ເປັນມູນຄ່າ..........................................ກີບ ເພື່ອຈ່າຍຊຳລະໃຫ້ສະຫະກອນອອມຊັບພະນັກງານ ທຫລ ຕາມມູນຄ່າສັນຍາກູ້ຢືມ ໃນກໍລະນີ ທ່ານ............................................... ມີບັນຫາຄ້າງຊຳລະເງິນກູ້ຢືມນຳສະຫະກອນອອມຊັບພະນັກງານ ທຫລ ພາຍໃນ 02 - 03 ເດືອນ ຕິດຕໍ່ກັນ.

ດັ່ງນັ້ນ, ຈຶ່ງເຮັດໜັງສືຢັ້ງຢືນຄໍ້າປະກັນສະບັບນີ້ ເພື່ອເປັນຫຼັກຖານໃນການຈັດຕັ້ງປະຕິບັດ.

ທີ່................................., ວັນທີ...........................

**ຜູ້ຄໍ້າປະກັນ**

(ລົງລາຍເຊັນ ແລະ ຊື່ແຈ້ງ)

ໝາຍເຫດ: ເອກະສານຄັດຕິດຂອງຜູ້ຄໍ້າປະກັນທີ່ບໍ່ແມ່ນພະນັກງານ ທຫລ:

- ❶ ສຳເນົາ ສຳມະໂນຄົວ / ບັດປະຈຳຕົວ / ໃບຢັ້ງຢືນທີ່ຢູ່ (ສະບັບເຄົ້າ).
- ❸ ສຳເນົາ ເອກະສານຊັບສິນຄໍ້າປະກັນ.